ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງ ໄຊຍະບູລີ

ເລກທີ 437/ຈຂ.ຊຍ

ໄຊຍະບູລີ, ວັນທີ 22 ມີນາ 2023

# ຂໍ້ຕົກລົງ
# ວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015, ພາກທີ III, ໝວດທີ 4, ມາດຕາ 20 ສິດ ແລະ ໜ້າທີ່ ຂອງເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງໄພພິບັດ ສະບັບເລກທີ 71/ສພຊ, ລົງວັນທີ 24 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍກອງທຶນຄຸ້ມຄອງໄພພິບັດ ສະບັບເລກທີ 631/ ລບ, ລົງວັນທີ 24 ທັນວາ 2020, ແລະ ແຈ້ງການແນະນຳ ຂອງຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ສະບັບເລກທີ 65/ຄພສ, ລົງວັນທີ 19 ພຶດສະພາ 2021;
- ອີງຕາມ ມະຕິກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນແຂວງ ສະບັບເລກທີ 21, ລົງວັນທີ 10 ກຸມພາ 2023.

## ເຈົ້າແຂວງໄຊຍະບູລີ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ກອງທຶນຄຸ້ມຄອງໄພພິບັດ ເພື່ອປຸກລະດົມທຶນ ຈາກ ບຸກຄົນ, ນິຕິບຸກຄົນ, ຄອບຄົວ, ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ແນ່ໃສ່ ໃຫ້ແກ່ການຊ່ວຍເຫຼືອສຸກເສີນ, ສ້ອມແປງພື້ນຖານໂຄງລ່າງທີ່ຈຳເປັນ, ການຊອກຄົ້ນ, ຄົ້ນຫາ ແລະ ກູ້ໄພ ເພື່ອເຮັດໃຫ້ຊີວິດການເປັນຢູ່ ຂອງປະຊາຊົນຜູ້ປະສົບໄພພິບັດ ກັບຄືນສູ່ສະພາບປົກກະຕິ ຫຼື ດີຂຶ້ນກວ່າເກົ່າ ປະກອບສ່ວນເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາແຂວງໄຊຍະບູລີ.

**ມາດຕາ 2 ກອງທຶນຄຸ້ມຄອງໄພພິບັດ**

ກອງທຶນຄຸ້ມຄອງໄພພິບັດ ຂຽນຫຍໍ້: "**ກພບ**" ແມ່ນ ກອງທຶນ ຂອງອົງການຈັດຕັ້ງລັດ ສ້າງຕັ້ງຂຶ້ນ ເພື່ອລະດົມ ແລະ ສະສົມທຶນ ຈາກແຫຼ່ງຕ່າງໆ ໃຫ້ມີງົບປະມານ ຊ່ວຍເຫຼືອສັງຄົມ ແນ່ໃສ່ຮັບປະກັນ ນຳໃຊ້ເຂົ້າໃນການຊ່ວຍເຫຼືອ

ບັນເທົາທຸກໃນຊ່ວງຕອບໂຕ້ໄພພິບັດສຸກເສີນ ແລະ ດ້ານມະນຸດສະທຳແກ່ເປົ້າໝາຍທີ່ໄດ້ຮັບຜົນເສຍຫາຍ ຈາກໄພພິບັດ.

**ມາດຕາ 3 ອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ ໃນຂໍ້ຕົກລົງສະບັບນີ້ ມີ ຄວາມໝາຍ ດັ່ງນີ້:

1. **ກອງທຶນ** ໝາຍເຖິງ ການສະສົມ ເງິນ ແລະ ວັດຖຸ ທີ່ໄດ້ມາຈາກຫຼາຍພາກສ່ວນ ເພື່ອຮັບໃຊ້ເຂົ້າໃນວຽກງານໄພພິບັດ;

2. **ການຄຸ້ມຄອງ** ໝາຍເຖິງ ການປົກປັກຮັກສາ ເງິນ ແລະ ວັດຖຸ ເພື່ອນຳໃຊ້ໃຫ້ຖືກຕ້ອງຕາມເປົ້າໝາຍ;

3. **ໄພພິບັດ** ໝາຍເຖິງ ເຫດການທີ່ເປັນອັນຕະລາຍຮ້າຍແຮງທີ່ເກີດຂຶ້ນຈາກທຳມະຊາດ ຫຼື ມະນຸດສ້າງຂຶ້ນທີ່ເປັນວົງກວ້າງ ເຊິ່ງໄດ້ສ້າງຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ສຸຂະພາບ, ຊີວິດ, ຊັບສິນ, ເສດຖະກິດ, ພື້ນຖານໂຄງລ່າງ ແລະ ການດຳລົງຊີວິດ ຂອງຄົນໃນສັງຄົມ ທັງໃນໄລຍະສັ້ນ ແລະ ໄລຍະຍາວ;

4. **ການຊ່ວຍເຫຼືອສຸກເສີນ** ໝາຍເຖິງ ການໃຫ້ການຊ່ວຍເຫຼືອອັນຮີບດ່ວນ ທັນທີທັນໃດໃຫ້ຜູ້ກຳລັງປະສົບໄພພິບັດ;

5. **ວັດຖຸປັດໄຈທີ່ໃຊ້ໃນການຊ່ວຍເຫຼືອ** ໝາຍເຖິງ ສະບຽງອາຫານ, ເຄື່ອງໃຊ້ໃນຄົວເຮືອນ, ເຄື່ອງນຸ່ງຫົ່ມ, ສິ່ງປຸກສ້າງ ແລະ ເຄື່ອງມືປະກອບອາຊີບ;

6. **ການປຸກລະດົມທຶນ** ໝາຍເຖິງ ລາຍຮັບທີ່ໄດ້ມາຈາກການອອກແຈ້ງການ, ບັດແຜ່ປັດໃຈ ຂອງການນຳແຂວງ ຫຼື ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ;

7. **ລາຍຮັບອື່ນ** ໝາຍເຖິງ ລາຍຮັບທີ່ໄດ້ມາຈາກການຈັດກິດຈະກຳ ລະດົມທຶນໃນຮູບແບບໃດໜຶ່ງ ທີ່ໄດ້ຮັບການອະນຸມັດ ຈາກການນຳ ແລະ ຄະນະກຳມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**ມາດຕາ 4 ນະໂຍບາຍຂອງລັດ**

ລັດ ມີນະໂຍບາຍໃນການຈັດຕັ້ງປະຕິບັດວຽກງານກອງທຶນຄຸ້ມຄອງໄພພິບັດ ດັ່ງນີ້:

ລັດ ຖືສຳຄັນວຽກງານກອງທຶນຄຸ້ມຄອງໄພພິບັດ ໂດຍການວາງຍຸດທະສາດ, ມາດຕະການ, ແຜນດຳເນີນງານ, ໂຄງການ, ສຶກສາອົບຮົມ, ສ້າງຈິດສຳນຶກ, ປະກອບບຸກຄະລາກອນ, ສະໜອງຂໍ້ມູນ-ຂ່າວສານ, ງົບປະມານ, ອຸປະກອນ, ພາຫະນະ ແລະ ລະດົມການຊ່ວຍເຫຼືອ ເພື່ອໃຫ້ການຈັດຕັ້ງທີ່ກ່ຽວຂ້ອງໄດ້ເຄື່ອນໄຫວວຽກງານຢ່າງມີປະສິດທິພາບ ແລະ ປະສິດທິຜົນ, ຮັບປະກັນຄວາມສະຫງົບ, ຄວາມປອດໄພ, ຫຼຸດຜ່ອນຄວາມສ່ຽງຕໍ່ຊີວິດ, ສຸຂະພາບ, ຊັບສິນ, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

ລັດ ຊຸກຍູ້ ປຸກລະດົມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ປະກອບສ່ວນດ້ານທຶນຮອນ, ເຕັກນິກວິຊາການ, ອຸປະກອນ, ພາຫະນະ, ວັດຖຸປັດໄຈຕ່າງໆ, ເຫື່ອແຮງ ແລະ ສະຕິປັນຍາເຂົ້າໃນກອງທຶນຄຸ້ມຄອງໄພພິບັດ.

ລັດ ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດ, ກໍ່ສ້າງພື້ນຖານໂຄງລ່າງ, ຄົ້ນຄວ້າ ແລະ ຖ່າຍທອດວິທະຍາສາດ, ນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ເປັນມິດກັບສິ່ງແວດລ້ອມ.

**ມາດຕາ 5 ຫຼັກການຄຸ້ມຄອງ ແລະ ນຳໃຊ້**

ການຄຸ້ມຄອງ ແລະ ນຳໃຊ້ກອງທຶນຄຸ້ມຄອງໄພພິບັດຕ້ອງປະຕິບັດຫຼັກການ ດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ, ຍຸດທະສາດ ແລະ ແຜນພັດທະນາເສດຖະກິດ-ສັງຄົມ ຂອງແຂວງ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;

2. ຖືເອົາການປ້ອງກັນໄພພິບັດ ເປັນວຽກງານຕົ້ນຕໍ, ການຄວບຄຸມ ແລະ ການຟື້ນຟູເປັນວຽກງານສຳຄັນ;

3. ຮັບປະກັນການສະໜອງຂໍ້ມູນ-ຂ່າວສານ ດ້ານອຸຕຸນິຍົມ, ອຸທົກກະສາດ, ຂໍ້ມູນສິ່ງແວດລ້ອມ, ຂໍ້ມູນຄວາມສ່ຽງ ແລະ ຂໍ້ມູນອື່ນ ກ່ຽວກັບໄພພິບັດ ໃຫ້ມີຄວາມຊັດເຈນ, ຕໍ່ເນື່ອງ, ວ່ອງໄວ ແລະ ທັນເວລາ;

4. ຮັບປະກັນການມີສ່ວນຮ່ວມຂອງທຸກພາກສ່ວນໃນສັງຄົມ ແລະ ການປະສານສົມທົບລະຫວ່າງບັນດາຂະແໜງການ, ອົງການປົກຄອງທ້ອງຖິ່ນ ທັງ ພາກລັດ ແລະ ເອກະຊົນ;

5. ຕ້ອງລວມສູນ, ເອກະພາບ, ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິຜົນ, ວ່ອງໄວ, ເປີດເຜີຍ, ໂປ່ງໃສ, ຍຸຕິທຳ ແລະ ສາມາດກວດສອບໄດ້;

6. ມີລະບົບການບັນທຶກ ລາຍຮັບ-ລາຍຈ່າຍ ທີ່ຊັດເຈນ ແລະ ດຳເນີນຜ່ານລະບົບບັນຊີ ຂອງຄັງເງິນ ປະຈຳແຂວງ ແລະ ປະຈຳ ເມືອງ.

**ມາດຕາ 6 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ແມ່ນນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ຄອບຄົວ ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດ ແລະ ກ່ຽວຂ້ອງກັບການເຄື່ອນໄຫວວຽກງານກອງທຶນຄຸ້ມຄອງໄພພິບັດ ທົ່ວແຂວງໄຊຍະບູລີ.

**ມາດຕາ 7 ການຮ່ວມມືສາກົນ**

ແຂວງ ສົ່ງເສີມໃຫ້ມີການພົວພັນຮ່ວມມືກັບການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ກ່ຽວກັບວຽກງານຄຸ້ມຄອງໄພພິບັດ ດ້ວຍການຍາດແຍ່ງທຶນ ສະໜັບສະໜູນ, ການແລກປ່ຽນບົດຮຽນ, ຂໍ້ມູນ-ຂ່າວສານ ແລະ ການພັດທະນາຊັບພະຍາກອນມະນຸດ ເພື່ອເຮັດໃຫ້ວຽກງານດັ່ງກ່າວໄດ້ຮັບການຍົກລະດັບ ຄວາມຮູ້, ຄວາມສາມາດຢ່າງມີປະສິດທິພາບ, ປະສິດທິຜົນ ແລະ ເປີດກວ້າງຮັບເອົາການຊ່ວຍເຫຼືອຈາກຕ່າງປະເທດໂດຍຖືກຕ້ອງຕາມລະບຽບກົດໝາຍ.

## ໝວດທີ 2
## ແຫຼ່ງລາຍຮັບ ຂອງກອງທຶນຄຸ້ມຄອງໄພພິບັດ

**ມາດຕາ 8 ແຫຼ່ງລາຍຮັບຂອງກອງທຶນ**

ລາຍຮັບຂອງກອງທຶນ ມາຈາກ ແຫຼ່ງ ດັ່ງນີ້:

1. ງົບປະມານຂອງລັດ;
2. ການປະກອບສ່ວນຂອງ ບຸກຄົນ, ຄອບຄົວ, ໂຄງການລົງທຶນ ແລະ ພາກສ່ວນທຸລະກິດ;
3. ການຊ່ວຍເຫຼືອຂອງການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ;
4. ການປຸກລະດົມທຶນ;
5. ລາຍຮັບອື່ນໆ ທີ່ຖືກຕ້ອງຕາມກົດໝາຍ.

ມາດຕາ 9 ແຫຼ່ງລາຍຮັບຈາກ ບຸກຄົນ, ຄອບຄົວ, ໂຄງການລົງທຶນ ແລະ ພາກສ່ວນທຸລະກິດ

ແຫຼ່ງລາຍຮັບຈາກ ການປະກອບສ່ວນ ເຂົ້າກອງທຶນ ມີ ດັ່ງນີ້:

1. ບຸກຄົນ: ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ແລະ ພະນັກງານທີ່ສັງກັດວິສາຫະກິດ ຂອງລັດ ແລະ ເອກະຊົນ ປະກອບສ່ວນ 20.000 ກີບ/ຄົນ/ປີ;

ສຳລັບ ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດຳລົງຊີວິດ, ອາໄສ ຫຼື ດຳເນີນທຸລະກິດ ປະກອບສ່ວນ 20.000 ກີບ/ຄົນ/ປີ;

2. ຄອບຄົວ: ປະກອບສ່ວນ 10.000 ກີບ/ຄອບຄົວ/ປີ;

ຄອບຄົວທີ່ເປັນພະນັກງານ ສ່ວນໃດສ່ວນໜຶ່ງ ປະກອບສ່ວນ 5.000 ກີບ, ຖ້າເປັນພະນັກງານທັງໝົດ ທີ່ໄດ້ປະກອບສ່ວນຢູ່ກົມກອງແລ້ວ ຈະບໍ່ໄດ້ປະກອບສ່ວນອີກ ແລະ ຖ້າເປັນຄອບຄົວທຸກຍາກ ແມ່ນໃຫ້ຍົກເວັ້ນ.

3. ໂຄງການລົງທຶນ: ບໍລິສັດທີ່ໄດ້ຮັບທຶນໂຄງການ ຈາກອົງການຄຸ້ມຄອງໄພພິບັດ ປະກອບສ່ວນ ດັ່ງນີ້:

- ໂຄງການທີ່ມີມູນຄ່າເກີນ 1 ຕື້ກີບຂຶ້ນໄປ ປະກອບສ່ວນ 0,1 % ຂອງມູນຄ່າໂຄງການ;
- ໂຄງການທີ່ມີມູນຄ່າ 1 ຕື້ກີບລົງມາ ປະກອບສ່ວນ 0,2 % ຂອງມູນຄ່າ ໂຄງການ.

ລາຍຮັບທີ່ເກັບໄດ້ຈາກບໍລິສັດ ມອບເຂົ້າກອງທຶນຂັ້ນແຂວງ 60% ແລະ ຂັ້ນເມືອງ 40% (ສະເພາະໃນມາດຕາ ນີ້).

4. ພາກສ່ວນທຸລະກິດ: ວິສາຫະກິດຂອງລັດ ແລະ ເອກະຊົນ ປະກອບສ່ວນ ດັ່ງນີ້:

| | |
|---|---|
| - ບໍລິສັດມະຫາຊົນ | 500.000 ກີບ/ທະບຽນ/ປີ; |
| - ວິສະຫະກິດຫຸ້ນສ່ວນ | 400.000 ກີບ/ທະບຽນ/ປີ; |
| - ວິສະຫະກິດ ຂອງລັດ | 300.000 ກີບ/ທະບຽນ/ປີ; |
| - ບໍລິສັດຈຳກັດ | 200.000 ກີບ/ທະບຽນ/ປີ; |
| - ບໍລິສັດຈຳກັດຜູ້ດຽວ | 100.000 ກີບ/ທະບຽນ/ປີ; |
| - ສາຫະກິດສ່ວນບຸກຄົນ | 50.000 ກີບ/ທະບຽນ/ປີ. |

ມາດຕາ 10 ການຈັດເກັບລາຍຮັບ

ການຈັດເກັບລາຍຮັບ ຕາມ ມາດຕາ 8 ມອບໃຫ້ກອງເລຂາ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແຕ່ລະຂັ້ນ ຈັດເກັບຕາມຂັ້ນຄຸ້ມຄອງ ແລະ ເກັບໄວ້ໃນຂັ້ນຂອງຕົນ ພາຍໃນງວດ ສອງ ຂອງທຸກໆ ປີ;

ສຳລັບ ຄອບຄົວ ມອບໃຫ້ອົງການປົກຄອງບ້ານຈັດເກັບ ແລະ ຫັກໄວ້ຂັ້ນບ້ານ ສິບ ສ່ວນຮ້ອຍ(10%) ຂອງມູນຄ່າທີ່ຈັດເກັບໄດ້ ແລ້ວມອບໃຫ້ກອງເລຂາຄະນະຮັບຜິດຊອບກອງທຶນຂັ້ນເມືອງ.

ມາດຕາ 11 ການຄຸ້ມຄອງ ລາຍຮັບ ແລະ ລາຍຈ່າຍ

ການຄຸ້ມຄອງ ລາຍຮັບ-ລາຍຈ່າຍກອງທຶນຄຸ້ມຄອງໄພພິບັດ ມີ ດັ່ງນີ້:

1. ການຄຸ້ມຄອງ ລາຍຮັບ

ການຄຸ້ມຄອງ ລາຍຮັບຂັ້ນແຂວງ ແລະ ເມືອງ ແມ່ນເປີດບັນຊີຢູ່ບັນຊີຄັງເງິນປະຈຳແຂວງ ແລະ ປະຈຳເມືອງ ແລະ ທະນາຄານໃດໜຶ່ງ ຕາມໝາຍເລກບັນຊີຄຸ້ມຄອງຂັ້ນຂອງຕົນ.

ເງິນກອງທຶນ ສາມາດນຳໄປມອບໄດ້ ສອງວິທີ ດັ່ງນີ້:

1) ມອບໃຫ້ກອງເລຂາຄະນະຮັບຜິດຊອບກອງທຶນ ແຕ່ລະຂັ້ນ;

2) ມອບເຂົ້າບັນຊີຄັງເງິນປະຈຳແຂວງ, ປະຈຳເມືອງ ຫຼື ບັນຊີທະນາຄານໃດໜຶ່ງ.

ການມອບເງິນແຕ່ລະຄັ້ງ ຕ້ອງປະຕິບັດຕາມ ຫຼັກການ-ການເງິນ ແລະ ມອບໃຫ້ສຳເລັດກ່ອນວັນທີ 30 ມິຖຸນາ ຂອງແຕ່ລະປີ ແລະ ພາຍຫຼັງມອບແລ້ວ ແຈ້ງກອງເລຂາຄະນະຮັບຜິດຊອບກອງທຶນ ເພື່ອຕິດຕາມ ກວດກາ ແລະ ຄຸ້ມຄອງ.

ວັດຖຸກອງທຶນ ສາມາດນຳໄປມອບໄດ້ ດັ່ງນີ້:

ວັດຖຸກອງທຶນ ມອບໃຫ້ກອງເລຂາຄະນະຮັບຜິດຊອບກອງທຶນ ແລະ ເກັບຮັກສາໄວ້ ຢູ່ສາງ ຂອງແຕ່ລະຂັ້ນ ໂດຍມີບັນຊີຕິດຕາມ ລາຍຮັບ-ລາຍຈ່າຍ, ຮັບປະກັນບໍ່ໃຫ້ຕົກເຮ່ຍເສຍຫາຍ ການເບີກຈ່າຍ ແລະ ແຈກຢາຍ ແຕ່ລະຄັ້ງ ໃຫ້ທັນກັບສະພາບການ.

2. **ການຄຸ້ມຄອງ ລາຍຈ່າຍ**

ການຄຸ້ມຄອງ ລາຍຈ່າຍຂັ້ນແຂວງ ແລະ ເມືອງ ມີ ດັ່ງນີ້:

ການຖອນເງິນຈາກບັນຊີເງິນຝາກກອງທຶນ ແຕ່ລະຄັ້ງ ຕ້ອງມີ ສອງ ໃນ ສາມ ລາຍເຊັນ ຕາມແບບພິມລາຍເຊັນ ຈຶ່ງສາມາດຖອນໄດ້ ແລະ ບໍ່ໃຫ້ເກີນ ເຈັດສິບສ່ວນຮ້ອຍ (70%) ຂອງເງິນກອງທຶນຢູ່ໃນບັນຊີ ແລະ ແຮໄວ້ ສາມສິບສ່ວນຮ້ອຍ (30%) ຂອງກອງທຶນ.

ການເບີກຈ່າຍວັດຖຸກອງທຶນ ແຕ່ລະຄັ້ງ ຕ້ອງມີການຢັ້ງຢືນ ການຮັບເຄື່ອງ ແລະ ນຳສົ່ງເຄື່ອງ ຕາມແບບພິມຂອງກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ.

**ມາດຕາ 12 ການສັ່ງຈ່າຍກອງທຶນ**

ການສັ່ງຈ່າຍກອງທຶນຄຸ້ມຄອງໄພພິບັດ ແຕ່ລະຂັ້ນ ມີ ດັ່ງນີ້:

**ກອງທຶນຂັ້ນແຂວງ** ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ;

**ກອງທຶນຂັ້ນເມືອງ** ແມ່ນປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນເມືອງ.

ກໍລະນີ ສຸກເສີນ ຜູ້ຖືກມອບສິດ ຫຼື ຫົວໜ້າກອງເລຂາຄະນະກຳມະການຄຸ້ມຄອງໄພພິບັດ ສາມາດສັ່ງຈ່າຍກອງທຶນໂດຍກົງ ເຂົ້າໃນການຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດໃນຂັ້ນ ຂອງຕົນ ແຕ່ຕ້ອງຂໍທິດຊີ້ນຳ, ລາຍງານ ປະທານ ຫຼື ຮອງປະທານ.

## ໝວດທີ 3
## ເປົ້າໝາຍ, ເງື່ອນໄຂ ແລະ ຮູບແບບການຊ່ວຍເຫຼືອ

**ມາດຕາ 13 ເປົ້າໝາຍການນຳໃຊ້ກອງທຶນ**

ກອງທຶນຄຸ້ມຄອງໄພພິບັດ ນຳໃຊ້ເຂົ້າໃນເປົ້າໝາຍ ດັ່ງນີ້:

1. ການຊ່ວຍເຫຼືອສຸກເສີນ;
2. ການຊ່ວຍເຫຼືອຟື້ນຟູ;

3. ການປະເມີນ ແລະ ການບໍລິຫານ.

## ມາດຕາ 14 ເງື່ອນໄຂທີ່ໄດ້ຮັບການຊ່ວຍເຫຼືອ

ການຮັບການຊ່ວຍເຫຼືອ ມີ ເງື່ອນໄຂ ດັ່ງນີ້:

1. ບຸກຄົນ, ຄອບຄົວໄດ້ຮັບຜົນເສຍຫາຍຈາກໄພພິບັດ ທີ່ໄດ້ປະກອບສ່ວນເຂົ້າກອງທຶນ;
2. ຄອບຄົວທຸກຍາກ ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດ.

## ມາດຕາ 15 ຜູ້ທີ່ໄດ້ຮັບການຊ່ວຍເຫຼືອ

ຜູ້ທີ່ໄດ້ຮັບການຊ່ວຍເຫຼືອ ສຸກເສີນ ປະກອບ ມີ ດັ່ງນີ້:

1. ບຸກຄົນ, ຄອບຄົວ, ຄົນຕ່າງດ້າວ, ຄົນຕ່າງປະເທດ ແລະ ຄົນບໍ່ມີສັນຊາດ ທີ່ດໍາລົງຊີວິດ, ອາໄສ ຫຼື ດໍາເນີນທຸລະກິດ ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດ;
2. ຜູ້ເສຍຊີວິດຈາກເຫດການໄພພິບັດທໍາມະຊາດ ເຊັ່ນ: ນໍ້າຖ້ວມ, ອັກຄີໄພ, ລົມພະຍຸພັດ, ຟ້າຜ່າ, ແຜ່ນດິນໄຫວ ແລະ ດິນເຈື່ອນທັບຖົມ.

## ມາດຕາ 16 ຮູບແບບການຊ່ວຍເຫຼືອ

ຮູບແບບການຊ່ວຍເຫຼືອ ຜູ້ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດສຸກເສີນ ປະກອບ ມີ:

**1. ການຊ່ວຍເຫຼືອສຸກເສີນ**

ການກູ້ໄພ, ການຊອກຄົ້ນ, ຄົ້ນຫາຜູ້ທີ່ໄດ້ຮັບເຄາະຮ້າຍຈາກໄພພິບັດຕ່າງໆ ທີ່ຮ້າຍແຮງ, ການຈັດສັນທີ່ພັກອາໄສຊົ່ວຄາວ, ສະໜອງຜ້າເຕັ້ນ ຫຼື ປຸກສ້າງທີ່ຢູ່ອາໄສຊົ່ວຄາວ, ເຄື່ອງອຸປະໂພກ-ບໍລິໂພກ, ເງິນອຸດໜູນເສຍຊີວິດ, ການບໍລິການແພດສຸກເສີນ, ການຈັດຊື້ອຸປະກອນຮັບໃຊ້ທີ່ຈໍາເປັນ, ສາງເກັບມ້ຽນເຄື່ອງ, ການຈັດສົ່ງ, ແຈກຢາຍເຄື່ອງຊ່ວຍເຫຼືອບັນເທົາທຸກສຸກເສີນ, ການຕັ້ງສູນບັນຊາການສຸກເສີນ ຢູ່ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານບ່ອນເກີດໄພພິບັດ ຕາມຄວາມເໝາະສົມ;

ກໍລະນີ ການຍົກຍ້າຍໄປຢູ່ເຂດປອດໄພ ຫຼື ຜູ້ທີ່ຖືກຕົກຄ້າງຢູ່ເຂດພື້ນທີ່ໄພພິບັດຈະໄດ້ຮັບການຊ່ວຍເຫຼືອ ເຄື່ອງບໍລິໂພກ ຕາມເງື່ອນໄຂຕົວຈິງ.

ການສ້ອມແປງ ໂຄງລ່າງພື້ນຖານທີ່ຈໍາເປັນ ແລະ ຮີບດ່ວນ ທີ່ມີຜົນເສຍຫາຍຈາກໄພພິບັດ ຖ້າກອງທຶນມີຄວາມຍືນຍົງ ກໍ່ສາມາດນໍາໃຊ້ໄດ້ ຕາມການຕົກລົງຂອງຄະນະກໍາມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ.

**2. ການຊ່ວຍເຫຼືອຟື້ນຟູ:**

ການຊ່ວຍເຫຼືອຟື້ນຟູດ້ານທີ່ຢູ່ອາໄສ: ບຸກຄົນ ແລະ ຄອບຄົວ ໄດ້ຮັບຜົນເສຍຫາຍຈາກໄພພິບັດ ທີ່ກໍາລັງອາໄສ ແຕ່ບໍ່ສາມາດອາໄສຢູ່ໄດ້ ໄດ້ຮັບການຊ່ວຍເຫຼືອອຸປະກອນສົມທົບປຸກສ້າງ ຫຼື ເປັນເງິນ ຈໍານວນ 2.000.000 ກີບ ຕໍ່ຄອບຄົວ ຕໍ່ຄັ້ງ;

ບຸກຄົນ ຫາກເສຍຊີວິດ ຍ້ອນໄພພິບັດທາງທໍາມະຊາດ ຈະໄດ້ຮັບການຊ່ວຍເຫຼືອຄອບຄົວ ເປັນເງິນຈໍານວນ 1.500.000 ກີບ ຕໍ່ຄົນ.

**3. ການປະເມີນ ແລະ ການບໍລິຫານ:**

ການລົງປະເມີນຜົນເສຍຫາຍ ແລະ ຄວາມຕ້ອງການຮີບດ່ວນ ເບື້ອງຕົ້ນ, ການເກັບກໍາຂໍ້ມູນ, ການນໍາໃຊ້ເງິນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຂອງຄະນະຮັບຜິດຊອບກອງທຶນ ຕ້ອງບົນພື້ນຖານການຕົກລົງ ຂອງຄະນະກໍາມະການຄຸ້ມຄອງກອງທຶນແຕ່ລະຂັ້ນ ຕາມລະບຽບການນໍາໃຊ້ງົບປະມານ ຂອງກະຊວງການເງິນວາງອອກເປັນແຕ່ລະໄລຍະ.

## ໝວດທີ 4
## ການປະກອບເອກະສານ ແລະ ການຈັດຕັ້ງປະຕິບັດ

**ມາດຕາ 17 ການປະກອບເອກະສານ**

ບຸກຄົນ ແລະ ຄອບຄົວ ປະກອບມີ ເອກະສານ ດັ່ງນີ້:

1. ໃບຄໍາຮ້ອງຂອງຜູ້ກ່ຽວ ຫຼື ຕົວແທນ ກໍລະນີ ຜູ້ກ່ຽວບໍ່ສາມາດຂຽນດ້ວຍຕົນເອງໄດ້ ຕ້ອງມີການຢັ້ງຢືນຈາກອົງການປົກຄອງບ້ານ;

2. ໃບຢັ້ງຢືນເປັນຄອບຄົວທຸກຍາກຈາກອົງການປົກຄອງບ້ານ (ຖ້າເປັນຄອບຄົວທຸກຍາກ);

3. ແບບພິມເກັບກໍາຂໍ້ມູນຂອງຄະນະຮັບຜິດຊອບກອງທຶນປະເມີນ;

4. ບົດບັນທຶກຜົນເສຍຫາຍທີ່ເກີດຂຶ້ນ ໂດຍຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນບ້ານສົມທົບກັບຂັ້ນເມືອງ ເປັນແຕ່ລະຄອບຄົວ ທີ່ໄດ້ຮັບຜົນເສຍຫາຍດ້ານທີ່ຢູ່ອາໄສ (ຕາມແບບພິມ ທີ່ກໍານົດໄວ້);

5. ຕາຕະລາງ ບັນຊີລາຍຊື່ ແຕ່ລະຄອບຄົວຂໍການຊ່ວຍເຫຼືອ (ຕາມແບບພິມທີ່ໄດ້ກໍານົດໄວ້) ກໍລະນີຫຼາຍບ້ານ, ຫຼາຍເມືອງ ໃຫ້ສັງລວມຕາມແບບພິມ;

6. ກອງເລຂາຄະນະຮັບຜິດຊອບກອງທຶນຂັ້ນແຂວງ, ຂັ້ນເມືອງ ສະເໜີຂໍອະນຸມັດຈ່າຍກອງທຶນ ຈາກປະທານຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນຂອງຕົນ;

ກໍລະນີ ກຸ່ມເປົ້າໝາຍ ຂ້າງເທິງເກີດເຫດການສຸກເສີນ ແລະ ຕ້ອງການຄວາມຊ່ວຍເຫຼືອຢ່າງຮີບດ່ວນຄະນະຮັບຜິດຊອບກອງທຶນ ສາມາດພິຈາລະນາໃຫ້ການຊ່ວຍເຫຼືອໂດຍທັນທີ ຕາມການຮ້ອງຂໍການຊ່ວຍເຫຼືອເບື້ອງຕົ້ນ, ຫຼັງຈາກນັ້ນ ຈຶ່ງປະກອບເອກະສານ ຕາມຂັ້ນຕອນພາຍຫຼັງ.

**ມາດຕາ 18 ຂັ້ນຕອນປະຕິບັດການຊ່ວຍເຫຼືອ**

ຂັ້ນຕອນປະຕິບັດການຊ່ວຍເຫຼືອ ຜູ້ທີ່ໄດ້ຮັບຜົນເສຍຫາຍຈາກໄພພິບັດ ມີ ດັ່ງນີ້:

1. ຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ຂັ້ນເມືອງ ສົມທົບກັບອົງການປົກຄອງແຕ່ລະຂັ້ນ ເບີກຈ່າຍໃຫ້ບັນດາເປົ້າໝາຍທີ່ໄດ້ຮັບການຊ່ວຍເຫຼືອ;

2. ການຊ່ວຍເຫຼືອທຸກຄັ້ງ ຕ້ອງມີການຢັ້ງຢືນ ລາຍເຊັນ ຫຼື ຈ້ຳໂປ້ ຈາກກຸ່ມເປົ້າໝາຍທີ່ໄດ້ຮັບການຊ່ວຍເຫຼືອ ແລະ ອົງການຈັດຕັ້ງແຕ່ລະຂັ້ນ;

3. ຄະນະກໍາມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ ສະຫຼຸບ ລາຍງານໃຫ້ປະທານຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນຂອງຕົນຮັບຊາບ.

ຖ້າຫາກວ່າ ເກີດໄພພິບັດເປັນວົງກວ້າງ ແລະ ຮ້າຍແຮງ ຊຶ່ງຜົນເສຍຫາຍເກີນຄວາມສາມາດໃຫ້ການຊ່ວຍເຫຼືອຂັ້ນຕົ້ນ ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ຈະພິຈາລະນາໄປຊ່ວຍໜູນ ຕາມຄວາມເໝາະສົມ.

## ໝວດທີ 5
## ການຄຸ້ມຄອງກອງທຶນຄຸ້ມຄອງໄພພິບັດ

**ມາດຕາ 19 ທີ່ຕັ້ງກອງທຶນຄຸ້ມຄອງໄພພິບັດ**

ກອງທຶນຄຸ້ມຄອງໄພພິບັດແຕ່ລະຂັ້ນ ມີ ທີ່ຕັ້ງ ດັ່ງນີ້:

1. ຂັ້ນແຂວງ ຕັ້ງຢູ່ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ;
2. ຂັ້ນເມືອງ ຕັ້ງຢູ່ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ.

**ມາດຕາ 20 ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ**

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດແບ່ງອອກເປັນ 2 ຂັ້ນ ດັ່ງນີ້:

1. ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ;
2. ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ.

**ມາດຕາ 21 ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ**

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ປະກອບດ້ວຍ:

1. ທ່ານ ຮອງເຈົ້າແຂວງ ປະທານຄະນະກຳມະການຄຸ້ມຄອງໄພພິບັດຂັ້ນແຂວງ ເປັນຫົວໜ້າ;
2. ທ່ານ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າພະແນກການເງິນແຂວງ ເປັນຮອງ;
4. ທ່ານ ຮອງຫົວໜ້າຫ້ອງວ່າການແຂວງ ເປັນຄະນະ;
5. ທ່ານ ຮອງຫົວໜ້າພະແນກແຜນການ ແລະ ການລົງທຶນແຂວງ ເປັນຄະນະ;
6. ທ່ານ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ;
7. ທ່ານ ຫົວໜ້າຫ້ອງການບໍລິຫານ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;
8. ທ່ານ ຫົວໜ້າຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ.

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ ມີສິດ, ໜ້າທີ່ຕາມຂອບເຂດຮັບຜິດຊອບຂອງຕົນ ດັ່ງນີ້:

1. ຄຸ້ມຄອງບໍລິຫານກອງທຶນຄຸ້ມຄອງໄພພິບັດ ໃຫ້ຖືກຕ້ອງຕາມລະບຽບການຂອງກອງທຶນ ແລະ ລະບຽບ ການທີ່ກ່ຽວຂ້ອງ;

2. ພິຈາລະນາ ແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈໍາປີ ຂອງກອງທຶນ ເພື່ອນໍາສະເໜີ ຕໍ່ຄະນະກໍາມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ ຕົກລົງ ແລະ ຮັບຮອງເອົາ;

3. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;

4. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນໍາໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນໍາໃຊ້ ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

5. ສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງກອງທຶນໃຫ້ຄະນະກໍາມະການຄຸ້ມຄອງໄພພິບັດ ທຸກ ເດືອນ ແລະ ໜຶ່ງ ປີ;

6. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຄະນະກໍາມະການຄຸ້ມຄອງໄພພິບັດ.

## ມາດຕາ 22 ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ ປະກອບດ້ວຍ:

1. ທ່ານ ຮອງເຈົ້າເມືອງ ປະທານຄະນະກໍາມະການຄຸ້ມຄອງໄພພິບັດຂັ້ນເມືອງ ເປັນຫົວໜ້າ;
2. ທ່ານ ຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຮອງ;
3. ທ່ານ ຮອງຫົວໜ້າຫ້ອງການການເງິນເມືອງ ເປັນຮອງ;
4. ທ່ານ ຮອງຫົວໜ້າຫ້ອງວ່າການເມືອງ ເປັນຄະນະ;
5. ທ່ານ ຮອງຫົວໜ້າຫ້ອງການແຜນການ ແລະ ການລົງທຶນເມືອງ ເປັນຄະນະ;
6. ທ່ານ ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ;
7. ທ່ານ ຫົວໜ້າໜ່ວຍງານບໍລິຫານ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;
8. ທ່ານ ຫົວໜ້າໜ່ວຍງານສະຫວັດດີການສັງຄົມ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຄະນະ.

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄຸ້ມຄອງບໍລິຫານ ກອງທຶນຄຸ້ມຄອງໄພພິບັດ ເພື່ອຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດນະໂຍບາຍ, ແຜນຍຸດທະສາດ, ຂໍ້ຕົກລົງ ຂອງຄະນະກໍາມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ, ລະບຽບການ ຂອງກອງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ;

2. ພິຈາລະນາແຜນການ ແລະ ແຜນງົບປະມານ ການເຄື່ອນໄຫວປະຈໍາປີ ຂອງກອງທຶນ ເພື່ອນໍາສະເໜີ ຕໍ່ຄະນະກໍາມະການຄຸ້ມຄອງໄພພິບັດແຕ່ລະຂັ້ນ ຕົກລົງ ແລະ ຮັບຮອງເອົາ;

3. ລະດົມຂົນຂວາຍ ແລະ ຊອກຫາແຫຼ່ງທຶນ ຈາກ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ເພື່ອປະກອບເຂົ້າກອງທຶນ;

4. ຕິດຕາມ ກວດກາ, ຄຸ້ມຄອງການເຄື່ອນໄຫວ ແລະ ນຳໃຊ້ກອງທຶນ ໃຫ້ສອດຄ່ອງກັບເປົ້າໝາຍນຳໃຊ້ ຕາມແຜນການ, ມີຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

5. ສະຫຼຸບລາຍງານ ສະພາບການເຄື່ອນໄຫວວຽກງານຮອບດ້ານ ຂອງກອງທຶນໃຫ້ຄະນະກຳມະການຄຸ້ມຄອງໄພພິບັດ ຫົກ ເດືອນ ແລະ ໜຶ່ງ ປີ;

6. ຮັບຮອງບົດລາຍງານຜົນການກວດສອບດ້ານການເງິນຂອງກອງທຶນ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຄະນະກຳມະການຄຸ້ມຄອງໄພພິບັດ.

## ມາດຕາ 23 ກອງເລຂາ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ

ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ປະກອບດ້ວຍ:

1. ທ່ານ ຮອງຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຫົວໜ້າ;
2. ທ່ານ ຫົວໜ້າ ຂະແໜງສັງຄົມສົງເຄາະ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຮອງ;
3. ທ່ານ ຮອງຫົວໜ້າຄັງເງິນປະຈຳແຂວງ ເປັນຄະນະ;
4. ທ່ານ ພະນັກງານບັນຊີການເງິນ ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ;
5. ທ່ານ ພະນັກງານວິຊາການຂະແໜງສັງຄົມສົງເຄາະພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ເປັນຄະນະ.

ກອງເລຂາ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ ມີ ສິດ, ໜ້າທີ່ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນປະຈຳ ຫົກ ເດືອນ ແລະ ປະຈຳປີ ສະເໜີຕໍ່ຄະນະຄະນະຮັບຜິດຊອບກອງທຶນ ເພື່ອພິຈາລະນາຮັບຮອງ ແລະ ສະເໜີຄະນະກຳມະການຄຸ້ມຄອງໄພພິບັດອະນຸມັດ;

2. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;

3. ຈັດຕັ້ງກິດຈະກຳຊອກຫາແຫຼ່ງທຶນ ເພື່ອລະດົມທຶນ ເຂົ້າກອງທຶນ;

4. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນ;

5. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການຂອງຄະນະຮັບຜິດຊອບກອງທຶນໄດ້ຮັບຮອງ;

6. ຕິດຕາມ, ກວດກາປະເມີນຜົນການນຳໃຊ້ກອງທຶນ;

7. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ຄະນະຮັບຜິດຊອບກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງເປັນປົກກະຕິ;

8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຄະນະຮັບຜິດຊອບກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ.

## ມາດຕາ 24 ກອງເລຂາ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ

ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ ປະກອບດ້ວຍ:

1. ທ່ານ ຮອງຫົວໜ້າຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຫົວໜ້າ;
2. ທ່ານ ຫົວໜ້າໜ່ວຍງານສະຫວັດດີການສັງຄົມ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຮອງ;
3. ທ່ານ ຮອງຫົວໜ້າຄັງເງິນປະຈຳເມືອງ ເປັນຄະນະ;
4. ທ່ານ ພະນັກງານບັນຊີການເງິນ ຫ້ອງການແຮງງານ ແລະ ສະຫວັດດີການສັງຄົມເມືອງ ເປັນຄະນະ.

ກອງເລຂາຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຂຶ້ນແຜນງານ, ໂຄງການ ແລະ ແຜນງົບປະມານ ຮັບໃຊ້ການເຄື່ອນໄຫວ ແລະ ລະດົມທຶນເຂົ້າກອງທຶນປະຈຳ ຫົກ ເດືອນ ແລະ ປະຈຳປີ ສະເໜີຕໍ່ຄະນະຄະນະຮັບຜິດຊອບກອງທຶນ ເພື່ອພິຈາລະນາ ຮັບຮອງ ແລະ ສະເໜີຄະນະກຳມະການຄຸ້ມຄອງໄພພິບັດອະນຸມັດ;
2. ຄຸ້ມຄອງບໍລິຫານ ການເຄື່ອນໄຫວວຽກງານປະຈຳວັນ ຂອງກອງທຶນ ໂດຍສອດຄ່ອງກັບແຜນການດ້ວຍຄວາມໂປ່ງໃສ ແລະ ມີປະສິດທິຜົນສູງ;
3. ຈັດຕັ້ງກິດຈະກຳຊອກຫາແຫຼ່ງທຶນ ເພື່ອລະດົມທຶນ ເຂົ້າກອງທຶນ;
4. ຄຸ້ມຄອງຊັບສິນ, ເງິນສົດ ແລະ ບັນຊີເງິນຝາກ ຂອງກອງທຶນ;
5. ເບີກຈ່າຍເງິນ ແລະ ວັດຖຸອຸປະກອນ ເພື່ອສະໜອງໃຫ້ແກ່ກິດຈະກຳຕ່າງໆ ຕາມແຜນການຂອງຄະນະຮັບຜິດຊອບກອງທຶນໄດ້ຮັບຮອງ;
6. ຕິດຕາມ, ກວດກາປະເມີນຜົນການນຳໃຊ້ກອງທຶນ;
7. ສະຫຼຸບ ແລະ ລາຍງານສະພາບການເຄື່ອນໄຫວວຽກງານຮອບດ້ານຂອງກອງທຶນ ຕໍ່ຄະນະຮັບຜິດຊອບ ກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ ຢ່າງເປັນປົກກະຕິ;
8. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ຕາມການມອບໝາຍ ຂອງຄະນະຮັບຜິດຊອບກອງທຶນ ແລະ ຄະນະກຳມະການຄຸ້ມຄອງໄພພິບັດ.

**ມາດຕາ 25 ກອງປະຊຸມຂອງຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ**

ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ມີລະບອບປະຊຸມ ຈັດຂຶ້ນປີລະ ສອງ ຄັ້ງ ເພື່ອສະຫຼຸບຕີລາຄາວຽກງານຮອບດ້ານ ໃນໄລຍະຜ່ານມາ ແລະ ວາງແຜນການ ປະຈຳ ຫົກ ເດືອນຕົ້ນປີ ແລະ ສະຫຼຸບປະຈຳປີ, ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ.

## ໝວດທີ 6
## ຂໍ້ຫ້າມ

**ມາດຕາ 26 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີ ພຶດຕິກຳ ດັ່ງນີ້:

1. ທຳລາຍ ຫຼື ປ່ຽນແປງສະພາບທຳມະຊາດ ແລະ ສະພາບແວດລ້ອມ ທີ່ຈະພາໃຫ້ເກີດໄພພິບັດ;
2. ສວຍໂອກາດກັກຕຸນ, ຂຶ້ນລາຄາສິນຄ້າ ແລະ ຄ່າຂົນສົ່ງໂດຍສານ;
3. ສວຍໂອກາດຮັບການບໍລິຈາກດ້ວຍຮູບການຕ່າງໆ;
4. ລະດົມການບໍລິຈາກ ໂດຍບໍ່ໄດ້ຮັບອະນຸຍາດ;
5. ໃຊ້ຄວາມຮຸນແຮງ, ທຳລາຍ, ລັກສິ່ງຂອງ ຜູ້ປະສົບໄພພິບັດ;
6. ສ້າງອຸປະສັກ, ຂັດຂວາງ, ເມີດເສີຍ ແລະ ບໍ່ໃຫ້ການຮ່ວມມືໃນວຽກງານຄຸ້ມຄອງໄພພິບັດ;
7. ເຜີຍແຜ່, ລາຍງານ ຫຼື ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງຕາມຄວາມເປັນຈິງ ຫຼື ໃຫ້ຂໍ້ມູນເທັດ;
8. ໃຫ້ ຫຼື ຮັບສິນບົນ, ສໍ້ໂກງຊັບ ແລະ ຍັກຍອກຊັບ;
9. ໃສ່ຮ້າຍປ້າຍສີ ຫຼື ໂຄສະນາທັບຖົມການຈັດຕັ້ງ ແລະ ພະນັກງານຂອງລັດ;
10. ບໍລິຈາກເຄື່ອງບໍລິໂພກ ລວມທັງຢາປົວພະຍາດ ທີ່ໝົດອາຍຸການນຳໃຊ້ ແລະ ເຄື່ອງອຸປະໂພກ ທີ່ບໍ່ສາມາດນຳໃຊ້ໄດ້;
11. ມີພຶດຕິກຳອື່ນ ທີ່ເປັນການລະເມີດ ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 27 ຂໍ້ຫ້າມສຳລັບຄະນະຮັບຜິດຊອບກອງທຶນ ແລະ ກອງເລຂາ**

ຫ້າມ ພະນັກງານ-ລັດຖະກອນ ທີ່ເຮັດໜ້າທີ່ໃນຄະນະຮັບຜິດຊອບກອງທຶນ ແລະ ກອງເລຂາ ມີ ພຶດຕິກຳ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ຄອບຄົວ ເພື່ອຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບເອົາສິນບົນ ຈາກບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ;
3. ປະຕິບັດໜ້າທີ່ດ້ວຍຄວາມປະໝາດ, ເລີ່ນເລີ້, ເມີນເສີຍ, ຂາດຄວາມຮັບຜິດຊອບຕໍ່ການປະຕິບັດໜ້າທີ່;
4. ກົດໜ່ວງ, ຖ່ວງດຶງ ເອກະສານ ໃນການແກ້ໄຂບັນຫາຕ່າງໆ ກ່ຽວກັບການຄຸ້ມຄອງໄພພິບັດ;
5. ຮຽກເອົາ ຄ່າທຳນຽມ, ຄ່າບໍລິການທີ່ບໍ່ຖືກຕ້ອງຕາມກົດໝາຍ;
6. ປອມແປງເອກະສານ, ອອກເອກະສານບໍ່ຖືກຕ້ອງ ຫຼື ທຳລາຍເອກະສານ;
7. ເປີດເຜີຍຄວາມລັບຂອງລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ;
8. ເພີ່ມ ຫຼື ຫຼຸດ ອັດຕາຄ່າຊ່ວຍເຫຼືອ ນຳໃຊ້ລາຍຮັບຈາກການຄຸ້ມຄອງໄພພິບັດ;
9. ມີພຶດຕິກຳອື່ນ ທີ່ເປັນການລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 28 ຂໍ້ຫ້າມຜູ້ທີ່ໄດ້ຮັບການຊ່ວຍເຫຼືອ**

ຫ້າມ ຜູ້ທີ່ໄດ້ຮັບການຊ່ວຍເຫຼືອຈາກກອງທຶນຄຸ້ມຄອງໄພພິບັດ ດັ່ງນີ້:

1. ລາຍງານຄວາມເສຍຫາຍຂອງຕົນ ຫຼື ຄອບຄົວ ທີ່ບໍ່ຖືກຕ້ອງ ແລະ ບໍ່ມີມູນຄວາມຈິງ;
2. ໃຫ້ຂໍ້ມູນ ຂ່າວສານທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນອັນເປັນເທັດ ແລະ ປອມແປງເອກະສານ;
3. ສົມຮູ້ຮ່ວມຄິດກັບພະນັກງານ ຫຼື ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ບິດເບືອນ, ກ່າວຫາພະນັກງານ, ເຈົ້າໜ້າທີ່ ຫຼື ການຈັດຕັ້ງໂດຍບໍ່ມີມູນຄວາມຈິງ;
5. ມີພຶດຕິກຳອື່ນ ທີ່ເປັນການຂັດຕໍ່ຂໍ້ຕົກລົງສະບັບນີ້, ກົດໝາຍ ແລະ ບຽບການອື່ນທີ່ກ່ຽວຂ້ອງ.

## ໝວດທີ 7
## ອົງການກວດກາ

**ມາດຕາ 29 ອົງການກວດກາ**

ອົງການກວດກາພາຍໃນ ປະກອບມີ:

ອົງການກວດກາພາຍໃນແມ່ນ ອົງການດຽວກັນກັບຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ.

ອົງກວດກາພາຍນອກ ປະກອບມີ:

1. ສະພາປະຊາຊົນແຂວງ;
2. ອົງການກວດກາລັດ;
3. ອົງການກວດສອບປະຈໍາພາກເໜືອ;
4. ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ການຈັດຕັ້ງທາງສັງຄົມ.

**ມາດຕາ 30 ເນື້ອໃນ ແລະ ຮູບການກວດກາ**

ເນື້ອໃນການກວດກາກອງທຶນຄຸ້ມຄອງໄພພິບັດ ມີ ດັ່ງນີ້:

1. ການຈັດຕັ້ງປະຕິບັດຫຼັກການ, ລະບຽບການ ແລະ ແຈ້ງການທີ່ກ່ຽວກັບກອງທຶນ;
2. ລາຍຮັບ-ລາຍຈ່າຍຂອງກອງທຶນຄຸ້ມຄອງໄພພິບັດ;
3. ປະລິມານ ແລະ ຄຸນນະພາບຂອງການນໍາໃຊ້ກອງທຶນຄຸ້ມຄອງໄພພິບັດ;
4. ຄໍາຮ້ອງ, ຄໍາສະເໜີຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
5. ຄວາມຮັບຜິດຊອບ ແລະ ການປະພຶດຂອງພະນັກງານ ທີ່ຈັດຕັ້ງປະຕິບັດວຽກງານກອງທຶນຄຸ້ມຄອງໄພພິບັດ.

ຮູບການກວດກາ ປະກອບດ້ວຍ:

1. ການກວດກາປົກກະຕິ ຊຶ່ງແມ່ນກວດກາຕາມແຜນການທີ່ກໍານົດໄວ້;
2. ການກວດກາ ເພື່ອຕິດຕາມຜົນ ແມ່ນກວດກາຄືນພາຍຫຼັງທີ່ກ່າວເຕືອນ ຫຼື ແນະນໍາໃຫ້ມີການປັບປຸງປ່ຽນແປງ;
3. ການກວດກາກະທັນຫັນ ແມ່ນກວດກາໂດຍບໍ່ໄດ້ແຈ້ງໃຫ້ຮູ້ລ່ວງໜ້າ, ການດໍາເນີນການກວດກາ ໃຫ້ປະຕິບັດກົດໝາຍ ແລະ ບຽບການຢ່າງເຂັ້ມງວດ.

## ໝວດທີ 8
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 31 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ປະກອບສ່ວນດ້ານເຫື່ອແຮງ, ສະຕິປັນຍາ ແລະ ຊັບສິນເຂົ້າໃນກອງທຶນຄຸ້ມຄອງໄພພິບັດ ຈະໄດ້ຮັບການຍ້ອງຍໍຕາມຄວາມເໝາະສົມ.

**ມາດຕາ 32 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຫາກລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ ຫຼື ຖືກລົງໂທດຕາມກົດໝາຍ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 33 ການຈັດຕັ້ງປະຕິບັດ**

ມອບໃຫ້ ຄະນະຮັບຜິດຊອບກອງທຶນຄຸ້ມຄອງໄພພິບັດ ແລະ ກອງເລຂາ ແຕ່ລະຂັ້ນ ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ເຂັ້ມງວດ ແລະ ໄດ້ຮັບຜົນດີ. ຕ້ອງມີການລາຍງານສະພາບການເຄື່ອນໄຫວຮອບດ້ານຂອງກອງທຶນຄຸ້ມຄອງໄພພິບັດ ໃຫ້ຂັ້ນເທິງ ປີລະ ສອງ ຄັ້ງ.

**ມາດຕາ 34 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ ວັນທີ 22 ມີນາ 2023 ພາຍຫຼັງ ເຈົ້າແຂວງໄຊຍະບູລີ ລົງລາຍເຊັນ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ເງິນກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ ສະບັບເລກທີ 676/ຈຂ.ຊຍ, ລົງວັນທີ 1 ກໍລະກົດ 2022.

**ເຈົ້າແຂວງ**

ພົງສະຫວັນ ສິດທະວົງ